ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

✦ ✦ ✦ ✦ ✦

ກະຊວງສຶກສາທິການ

ເລກທີ: 1203 /ສສ.ປອ/09

ນະຄອນຫຼວງວຽງຈັນ, ວັນທີ 30 NOV 2009

# ຄຳສັ່ງແນະນຳ

ເຖິງ : ທ່ານ ຫົວໜ້າພະແນກສຶກສາທິການນະຄອນຫລວງ ແລະ ພະແນກສຶກສາທິການແຂວງ.

ເລື່ອງ : ການຈັດຕັ້ງປະຕິບັດ ການເລື່ອນຂັ້ນແບບຕໍ່ເນື່ອງ ສຳລັບຂັ້ນປະຖົມສຶກສາ .

**- ອີງຕາມ** : ແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນ 2003-2015 ແລະ ຂອບພັດທະນາຂະແໜງການສຶກສາ 2009-2015.

- ອີງຕາມ : ການຕົກລົງເຫັນດີຂອງກອງປະຊຸມຜູ້ບໍລິຫານການສຶກສາທົ່ວປະເທດ ທີ່ແຂວງໄຊຍະບູລີ ຄັ້ງວັນທີ 22-24 ມິຖຸນາ(6) 2009 .

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງມີຄວາມເປັນເອກະພາບໃນທົ່ວປະເທດ ລັດຖະມົນຕີວ່າການ ກະຊວງສຶກສາທິການ ຈຶ່ງອອກຄຳສັ່ງແນະນຳມີລາຍລະອຽດດັ່ງລຸ່ມນີ້ :

## I. ຄວາມເປັນມາແລະເຫດຜົນ.

ໃນໄລຍະທີ່ຜ່ານມາ ເຫັນວ່າການປັບປຸງຄຸນະພາບການຮຽນ-ການສອນໃນຂັ້ນປະຖົມສຶກສາຍັງບໍ່ທັນດີຂຶ້ນເທົ່າທີ່ຄວນ ເຊັ່ນ : ອັດຕາຄ້າງຫ້ອງ ແລະ ອັດຕາປະລະການຮຽນຍັງສູງ ໂດຍສະເພາະແມ່ນຂັ້ນຮຽນ ປ1 ແລະ ປ2, ອັດຕາລອດເຫຼືອ ແລະ ປະສິດທິຜົນທາງດ້ານການຮຽນຍັງຕໍ່າ. ເພື່ອເຮັດໃຫ້ບັນຫາທີ່ກ່າວມານີ້ໄດ້ຖືກແກ້ໄຂໃຫ້ດີຂຶ້ນ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຈະຕ້ອງໄດ້ນຳໃຊ້ ວິທີການ ການເລື່ອນຂັ້ນແບບຕໍ່ເນື່ອງ ເຊິ່ງຈະເຮັດໃຫ້ຜູ້ອຳນວຍການໂຮງຮຽນ ແລະ ຄູສອນ ມີຄວາມຮັບຜິດຊອບຕໍ່ໜ້າທີ່ຂອງຕົນ ແລະ ນັກຮຽນສູງຂຶ້ນ.

## II. ຄວາມໝາຍ

ການເລື່ອນຂັ້ນແບບຕໍ່ເນື່ອງແມ່ນການເລື່ອນຂັ້ນ ໂດຍນຳໃຊ້ນະໂຍບາຍ, ລະບຽບຫຼັກການ, ວິທີການທາງດ້ານການບໍລິຫານ-ຄຸ້ມຄອງການສຶກສາ, ດ້ານວິຊາການ ການສຶກສາເຂົ້າຊ່ວຍຢ່າງຕັ້ງໜ້າ ເພື່ອຍົກລະດັບຄຸນະພາບການສຶກສາຂັ້ນປະຖົມສຶກສາໃຫ້ດີຂຶ້ນ ແລະ ຫຼຸດຜ່ອນການຄ້າງຫ້ອງໃນຂັ້ນປະຖົມສຶກສາໂດຍສະເພາະແມ່ນຂັ້ນຮຽນປ1 ແລະ ປ2. ການເລື່ອນຂັ້ນແບບຕໍ່ເນື່ອງໃຫ້ມີຄຸນະພາບນັ້ນຈະຕ້ອງໄດ້ດຳເນີນ 2 ມາດຕະການໄປພ້ອມໆກັນຄື: ການຕິດຕາມ, ຊ່ວຍເຫຼືອ ແລະ ບຳລຸງນັກຮຽນທີ່ຮຽນອ່ອນ ແລະ ການວັດຜົນແບບ

ຕໍ່ເນື່ອງໂດຍນຳໃຊ້ເຄື່ອງມື.

III . ຈຸດປະສົງ.

- ເພື່ອຜັນຂະຫຍາຍດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການປະຖົມສຶກສາແບບບັງຄັບ ແນໃສ່ບັນລຸເປົ້າໝາຍຂອງແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນສຳລັບປີ2015.
- ເພື່ອເຮັດຜູ້ບໍລິຫານການສຶກສາແຕ່ລະຂັ້ນ ເພີ່ມທະວີຄວາມຮັບຜິດຊອບຕໍ່ການບໍລິຫານ-ຄຸ້ມຄອງການສຶກສາໃຫ້ມີປະສິດທິພາບ.
- ເພື່ອເຮັດໃຫ້ຄູສອນມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ ແລະ ຮັບປະກັນການສອນຂອງຕົນເອງຢ່າງມີປະສິດທິຜົນ.
- ເພື່ອປັບປຸງຄຸນະພາບ ແລະ ປະສິດທິຜົນຂອງການສຶກສາຊັ້ນປະຖົມໃຫ້ດີຂຶ້ນ.
- ເພື່ອຫຼຸດຜ່ອນອັດຕາຄ້າງຫ້ອງແລະອັດຕາປະລະການຮຽນລົງໃຫ້ເຫຼືອໜ້ອຍທີ່ສຸດ.

IV . ຄາດໝາຍສຳລັບແຕ່ນີ້ຫາປີ 2015.

- ອັດຕາຄ້າງຫ້ອງ :
  - ຫຼຸດຜ່ອນອັດຕາຄ້າງຫ້ອງ ປ1-ປ2 ໃຫ້ຍັງເຫຼືອ 10 % ໃນປີ 2012 .
  - ຫຼຸດຜ່ອນອັດຕາຄ້າງຫ້ອງ ປ1- ປ2 ໃຫ້ຍັງເຫຼືອ 3 % ໃນປີ 2015 .
- ອັດຕາປະລະ :
  - ຫຼຸດຜ່ອນອັດຕາປະລະການຮຽນ ປ1-ປ2 ໃຫ້ຍັງເຫຼືອ 5 % ໃນປີ 2012 .
  - ຫຼຸດຜ່ອນອັດຕາປະລະການຮຽນ ປ1-ປ2 ໃຫ້ຍັງເຫຼືອ 2 % ໃນປີ 2015 .

V. ຫຼັກການແລະວິທີການເຮັດວຽກ.

1. ຫຼັກການແລະວິທີການເຮັດວຽກຂອງຜູ້ອຳນວຍການໂຮງຮຽນ.
   - ສຶກສາແນວຄິດການເມືອງໃຫ້ແກ່ຄູສອນ ແລະ ເປັນແບບຢ່າງນຳພາ ການເລື່ອນຊັ້ນແບບຕໍ່ເນື່ອງພາຍໃນໂຮງຮຽນຂອງຕົນເອງໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.
   - ຊຸກຍູ້ອນ ຄູອາວຸໂສທີ່ສອນດີ, ສອນເກັ່ງ ແລະ ມີປະສົບປະການເຂົ້າສອນຊັ້ນຮຽນປ1 ແລະ ຊັ້ນ ປ2.
   - ປະຕິບັດການນິເທດພາຍໃນເປັນປົກກະຕິ ໂດຍເນັ້ນໃສ່ການນິເທດດ້ານວິຊາການເປັນຕົ້ນຕໍ.
   - ໂຮງຮຽນໃດມີເງື່ອນໄຂກໍໃຫ້ນຳໃຊ້ການວັດຜົນແບບຕໍ່ເນື່ອງໂດຍໃຊ້ເຄື່ອງມືຂອງການວັດຜົນ.
   - ຈັດການສອບເສັງແຕ່ລະວິຊາປະຈຳພາກຮຽນທີ 1 ແລະ ພາກຮຽນທີ 2 .
   - ພົວພັນ, ສົມທົບກັບຄະນະພັດທະນາການສຶກສາບຊັ້ນບ້ານ ຫຼື ອຳນາດການປົກຄອງບ້ານ ແລະ ສະມາຄົມພໍ່ແມ່ນັກຮຽນ ເພື່ອໃຫ້ການມີຮ່ວມມື ແລະ ສະໜັບສະໜູນ.
   - ພົວພັນ, ສົມທົບກັບຄູນິເທດຂັ້ນເມືອງ ຫຼື ກຸ່ມໂຮງຮຽນ (ວິທະຍາກອນປະຈຳກຸ່ມ ຫຼື ຜູ້ຮັບຜິດຊອບສູນຊັບພະຍາກອນ,ຄູວິຊາການກຸ່ມ) ເພື່ອນິເທດຕິດຕາມ, ຊ່ວຍເຫຼືອ ແລະ ນຳພາເດືອນລະຄັ້ງ .

- ຈັດຕາຕະລາງການບຳລຸງນັກຮຽນທີ່ຮຽນອ່ອນປະຈຳອາທິດໃຫ້ແກ່ຄູ.
- ຖອດຖອນບົດຮຽນກ່ຽວກັບການປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງ ປະຈຳເດືອນ ແລະ ປະຈຳພາກຮຽນ.

2. *ຫຼັກການແລະວິທີການເຮັດວຽກຂອງຄູສອນ.*

- ສອນເຕັມຊົ່ວໂມງຂອງທຸກວິຊາຕາມຫຼັກສູດທີ່ກະຊວງສຶກສາທິການກຳນົດໄວ້.
- ວັດຜົນ(ໃຫ້ຄະແນນ) ແລະ ປະເມີນຜົນການຮຽນຂອງນັກຮຽນໃນແຕ່ລະຊົ່ວໂມງຮຽນ, ແຕ່ລະບົດ, ແຕ່ລະພາກວິຊາຮຽນ ແລະ ປະຈຳເດືອນ ເພື່ອມີວິທີການຊ່ວຍນັກຮຽນເປັນລາຍບຸກຄົນໃຫ້ສອດຄ່ອງທັນການ.
- ແຕ່ລະວິຊາຢ່າງຕ່ຳໃຫ້ມີ 3 ຄະແນນ ຕໍ່ເດືອນ ເພື່ອໃຫ້ນັກຮຽນໄດ້ມີໂອກາດປັບປຸງວິທີຮຽນ, ປັບປຸງພຶດຕິກຳການຮຽນໃຫ້ມີທ່າກ້າວດີຂຶ້ນ,ຄູເອງຈະໄດ້ປັບປຸງວິທີການສອນ ແລະ ພຶດຕິກຳການສອນຂອງຕົນ ພ້ອມດຽວກັນນັ້ນຕ້ອງໄດ້ເອົາໃຈໃສ່ເປັນພິເສດຕໍ່ນັກຮຽນທີ່ມີຄວາມຮັບຮູ້ຊ້າ.
- ຈັດກິດຈະກຳເຝິກຫັດເສີມໃຫ້ນັກຮຽນໄດ້ເຮັດ ເຊັ່ນ : ກິດຈະກຳເພື່ອນຊ່ວຍເພື່ອນ, ກິດຈະກຳເຮັດວຽກເປັນກຸ່ມ , ວຽກບ້ານ ຫຼື ບົດເຝິກຫັດ.
- ກວດກາ(ໃຫ້ຄະແນນ) ວຽກບ້ານ ຫຼື ບົດເຝິກຫັດຂອງນັກຮຽນເປັນປົກກະຕິແລະໃຫ້ຄຳແນະນຳແກ່ນັກຮຽນທຸກຄົນ ເພື່ອໃຫ້ນັກຮຽນມີວິທີການປັບປຸງການຮຽນຂອງຕົນເອງໃຫ້ດີຂຶ້ນ.
- ຈັດປະເພດນັກຮຽນຕາມຜົນການຮຽນໃຫ້ໄດ້ເຊັ່ນ: ດີ, ກາງ, ອ່ອນ.
- ວາງແຜນການຫຼຸດຈຳນວນນັກຮຽນທີ່ຮຽນອ່ອນໃນຫ້ອງຂອງຕົນຕາມຄວາມກ້າວໜ້າຂອງນັກຮຽນ ແລະ ໃຫ້ສຳເລັດກ່ອນສິ້ນສຸດປີຮຽນ. ຖ້າຫາກຍັງມີນັກຮຽນອ່ອນທີ່ບໍ່ຜ່ານວິຊາໃດໜຶ່ງຄູຈະຕ້ອງໄດ້ສືບຕໍ່ບຳລຸງນັກຮຽນດັ່ງກ່າວໃນໄລຍະກ່ອນເປີດສົກຮຽນໃໝ່.
- ຈັດຕັ້ງບຳລຸງນັກຮຽນທີ່ຮຽນອ່ອນ ສຳລັບວິຊາທີ່ນັກຮຽນຍັງບໍ່ຜ່ານ ອາທິດລະ 2 ຊົ່ວໂມງ.
- ມີການສົມທົບກັບພໍ່ແມ່ນັກຮຽນ ເພື່ອຕິດຕາມ, ຊ່ວຍເຫຼືອ ແລະ ໃຫ້ໂອກາດລູກໄດ້ມີເວລາຮຽນຢູ່ເຮືອນ.
- ຖອດຖອນບົດຮຽນຮ່ວມກັນກ່ຽວກັບການຈັດການຮຽນ-ການສອນ ແລະ ການຈັດຕັ້ງບຳລຸງນັກຮຽນທີ່ຮຽນອ່ອນ ເດືອນລະ 1 ຄັ້ງ ໂດຍສະເພາະ ຄູສອນຂັ້ນຮຽນ ປ1 ແລະ ປ2.
- ໃຫ້ນັກຮຽນທຸກຄົນມີປຶ້ມບົດເຝິກຫັດ ແລະ ແຟ້ມສະສົມຜົນງານຂອງຕົນ.

3. **ຫຼັກການແລະວິທີການຄິດໄລ່ຄະແນນ :**

ວິທີການຄິດໄລ່ຄະແນນແມ່ນປະຕິບັດຕາມ ຫຼັກການລວມໃນການກວດກາ ແລະ ສອບເສັງສຳລັບໂຮງຮຽນສາມັນສຶກສາຂອງ ສ.ປ.ປ.ລາວ ສະບັບເລກທີ່ 538/ສສ.ສມ/02 ລົງວັນທີ 22/04/2002. ການຄິດໄລ່ຄະແນນລວມ ຫຼື ຄະແນນສະເລ່ຍ ໃຫ້ຄິດໄລ່ສະເພາະແຕ່ລະວິຊາໃດ ວິຊານັ້ນບໍ່ໃຫ້ລວມ ແລະ ສະເລ່ຍຄະແນນຂອງໝົດທຸກວິຊາເຂົ້າກັນ.

- <u>ຄະແນນສະເລ່ຍຂອງແຕ່ລະວິຊາປະຈຳເດືອນ</u> :

ແມ່ນຜົນບວກຂອງຄະແນນສະເລ່ຍຂອງການກວດກາປະຈຳບົດຮຽນ, ປະຈຳອາທິດ ແລະ ອື່ນໆ ບວກກັບ ຄະແນນກວດກາປະຈຳເດືອນຂອງວິຊານັ້ນ ແລ້ວຫານໃຫ້ 2 . ຖ້າໄດ້ຄະແນນ 5 ຂຶ້ນໄປຖືວ່າໄດ້ຄາດໝາຍ.

- <u>ຄະແນນສະເລ່ຍຂອງແຕ່ລະວິຊາປະຈຳພາກຮຽນ</u>:

ແມ່ນເອົາຄະແນນສະເລ່ຍຂອງວິຊາຮຽນປະຈຳເດືອນ ບວກກັບ ຄະແນນສອບສັງປະຈຳພາກຮຽນຂອງວິຊາຮຽນນັ້ນ ແລ້ວຫານໃຫ້ 2. ຖ້າໄດ້ ຄະແນນ 5 ຂຶ້ນໄປຖືວ່າໄດ້ຄາດໝາຍ.

- <u>ຄະແນນສະເລ່ຍຂອງແຕ່ລະວິຊາປະຈຳປີ</u>:

ໃຫ້ເອົາຄະແນນສະເລ່ຍຂອງແຕ່ລະວິຊາພາກຮຽນທີ1 ບວກກັບ ຄະແນນສະເລ່ຍຂອງແຕ່ລະວິຊານັ້ນພາກຮຽນທີ 2 ແລ້ວຫານໃຫ້ 2 . ຖ້າໄດ້ ຄະແນນ 5 ຂຶ້ນໄປຖືວ່າໄດ້ຄາດໝາຍ

ນັກຮຽນທີ່ເລື່ອນຊັ້ນຮຽນໄດ້ ຕ້ອງມີຄະແນນສະເລ່ຍປະຈຳປີຂອງແຕ່ລະວິຊາໄດ້ ຄະແນນ 5 ຂຶ້ນໄປ ຍົກເວັ້ນນັກຮຽນຮັບຮູ້ຊ້າ .

## <u>VI . ການຈັດຕັ້ງຄຸ້ມຄອງ.</u>

### 1. ການຈັດຕັ້ງຄຸ້ມຄອງຂັ້ນນະຄອນຫຼວງ/ແຂວງ:

ໃຫ້ພະແນກສຶກສາທິການນະຄອນຫຼວງ ແລະ ພະແນກສຶກສາທິການແຂວງ ແຕ່ງຕັ້ງຄະນະຮັບຜິດຊອບການເລື່ອນຊັ້ນແບບຕໍ່ເນື່ອງສຳລັບຊັ້ນປະຖົມ ເຊິ່ງປະກອບມີ :

| | | |
|---|---|---|
| 1. ຫົວໜ້າ ຫຼື ຮອງຫົວໜ້າພະແນກສຶກສາທິການນະຄອນຫຼວງ/ແຂວງ | | ເປັນ ຫົວໜ້າ |
| 2. ຫົວໜ້າຂະແໜງປະຖົມ-ອະນຸບານ | | ເປັນ ຮອງ |
| 3. ຫົວໜ້າຂະແໜງກວດກາແລະປະເມີນຜົນ | | ເປັນ ກຳມະການ |
| 4. ຫົວໜ້າຂະແໜງສະຖິຕິ-ແຜນການ | | ເປັນ ກຳມະການ |
| 5. ຫົວໜ້າຂະແໜງພັດທະຄູ | | ເປັນ ກຳມະການ |
| 6. ວິຊາການຂະແໜງປະຖົມ-ອະນຸບານ | 2 ທ່ານ | ເປັນ ເລຂານຸການ |

ຄະນະຮັບຜິດຊອບການເລື່ອນຊັ້ນແບບຕໍ່ເນື່ອງສຳລັບຊັ້ນປະຖົມຂັ້ນນະຄອນຫຼວງ ແລະ ຂັ້ນແຂວງມີໜ້າທີ່ດັ່ງນີ້:

1. ຊີ້ນຳ, ຊຸກຍູ້ ແລະ ຊ່ວຍເຫຼືອ ຫ້ອງການສຶກສາທິການເມືອງໃນການຈັດຕັ້ງດຳເນີນການເລື່ອນຊັ້ນແບບຕໍ່ເນື່ອງໃຫ້ມີຜົນສຳເລັດດີ.
2. ຕິດຕາມ,ກວດກາ ແລະ ປະເມີນຜົນການດຳເນີນ ການເລື່ອນຊັ້ນແບບຕໍ່ເນື່ອງຮ່ວມກັບຫ້ອງການສຶກສາທິການເມືອງ.
3. ວິໄຈຜົນຂອງການດຳເນີນ ການເລື່ອນຊັ້ນແບບຕໍ່ເນື່ອງ ແລະ ມີວິທີການແກ້ໄຂໃຫ້ທັນເວລາ.
4. ຈັດຕັ້ງການຖອດຖອນບົດຮຽນປະຈຳປີ ກ່ຽວກັບການເລື່ອນຊັ້ນແບບຕໍ່ເນື່ອງ.
5. ລາຍງານຜົນສຳເລັດການເລື່ອນຊັ້ນແບບຕໍ່ເນື່ອງໃຫ້ຂັ້ນເທິງຊາບ.

## 1.2. ການຈັດຕັ້ງຄຸ້ມຄອງຂັ້ນເມືອງ:

ໃຫ້ຫ້ອງການສຶກສາທິການເມືອງ ແຕ່ງຕັ້ງຄະນະຮັບຜິດຊອບການເລື່ອນຂັ້ນແບບຕໍ່ເນື່ອງ ສຳລັບຊັ້ນປະຖົມ ເຊິ່ງປະກອບມີ :

| | | |
|---|---|---|
| 1. ຮອງຫົວໜ້າຫ້ອງການສຶກສາທິການເມືອງ ຜູ້ຊີ້ນຳວິຊາການ | | ເປັນຫົວໜ້າ |
| 2. ຫົວໜ້າໜ່ວຍງານການສຶກສາກ່ອນໄວຮຽນແລະສາມັນ | | ເປັນ ຮອງ |
| 3. ຫົວໜ້າໜ່ວຍງານກວດກາແລະປະເມີນຜົນ | | ເປັນ ກຳມະການ |
| 4. ຫົວໜ້າໜ່ວຍງານແຜນການ | | ເປັນ ກຳມະການ |
| 5. ຫົວໜ້າໜ່ວຍງານພັດທະນາຄູ | | ເປັນ ກຳມະການ |
| 5. ຄູສຶກສານິເທດ | 3-4 ທ່ານ | ເປັນ ກຳມະການ |
| 6. ວິຊາການຂອງໜ່ວຍງານສາມັນ | 2 ທ່ານ | ເປັນ ເລຂານຸການ |

ຄະນະຮັບຜິດຊອບການເລື່ອນຂັ້ນແບບຕໍ່ເນື່ອງສຳລັບຊັ້ນປະຖົມຂັ້ນເມືອງມີໜ້າທີ່ດັ່ງນີ້:

1. ສ້າງແຜນການດຳເນີນງານການເລື່ອນຂັ້ນແບບຕໍ່ເນື່ອງປະຈຳປີ, ປະຈຳ 3 ປີ ແລະ 5 ປີ .
2. ຊີ້ນຳ, ຊຸກຍູ້, ຊ່ວຍເຫຼືອ ແລະ ນຳພາໂຮງຮຽນໃນການຈັດຕັ້ງດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງໃຫ້ມີຜົນສຳເລັດດີ.
3. ຕິດຕາມ,ກວດກາ ແລະ ປະເມີນຜົນການດຳເນີນ ການເລື່ອນຂັ້ນແບບຕໍ່ເນື່ອງໃນລະດັບໂຮງຮຽນ.
4. ວິໄຈຜົນຂອງການດຳເນີນ ການເລື່ອນຂັ້ນແບບຕໍ່ເນື່ອງ ເພື່ອຊອກຫາສາເຫດຂອງບັນຫາ ແລະ ມີວິທີການແກ້ໄຂໃຫ້ທັນເວລາ.
5. ຈັດຕັ້ງການຖອດຖອນບົດຮຽນປະຈຳພາກຮຽນ,ປະຈຳປີ ກ່ຽວກັບການເລື່ອນຂັ້ນແບບຕໍ່ເນື່ອງພາຍໃນເມືອງຂອງຕົນ.
6. ລາຍງານຜົນສຳເລັດໃຫ້ພະແນກສຶກສາທິການແຂວງຂອງຕົນພາກຮຽນລະຄັ້ງ.

## VII . ວິທີການຈັດຕັ້ງປະຕິບັດ

***ໄລຍະທີ 1:***

ການຈັດຕັ້ງດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງໃນໄລຍະທີ1 ໃຫ້ເລີ່ມແຕ່ສົກຮຽນ 2009-2010 ເປັນຕົ້ນໄປ. ຈຳນວນໂຮງຮຽນທີ່ຈະຈັດຕັ້ງປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງໃນໄລຍະທີ1 ແມ່ນໃຫ້ເລັງໃສ່ໂຮງຮຽນທີ່ມີອັດຕາຄ້າງຫ້ອງຢູ່ລະຫວ່າງ 15-20 % , ຖ້າເດັກໄດ້ເຂົ້າໂຮງຮຽນອະນຸບານ ຫຼື ຫ້ອງກຽມປະຖົມກໍຍິ່ງເປັນການດີ. ແຕ່ລະເມືອງໃຫ້ມີຈຳນວນໂຮງຮຽນຕາມຄວາມເໝາະສົມ ໂດຍອີງໃສ່ຄວາມສາມາດຄຸ້ມຄອງຂອງຫ້ອງການສຶກສາທິການເມືອງ. ຖ້າໂຮງຮຽນໃດທີ່ອັດຕາຄ້າງຫ້ອງຕ່ຳກວ່າ15% ກໍໃຫ້ດຳເນີນການໄດ້ເລີຍ.

ໃນສົກຮຽນປີ 2009-2010 ການຈັດຕັ້ງດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງໃຫ້ປະຕິບັດຕາມຂາດກ້າວດັ່ງລຸ່ມນີ້ :

- ***ກ່ອນດຳເນີນການ :***
  - ພະແນກສຶກສາທິການນະຄອນຫຼວງ/ແຂວງຈັດກອງປະຊຸມເຜີຍແຜ່ ຄຳສັ່ງແນະນຳຂອງລັດຖະມົນຕີ

ວ່າການກະຊວງສຶກສາທິການກ່ຽວກັບການຈັດຕັ້ງ ແລະ ດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງສຳລັບຂັ້ນປະຖົມສຶກສາໃຫ້ແກ່ຄະນະຮັບຜິດຊອບການເລື່ອນຂັ້ນແບບຕໍ່ເນື່ອງສຳລັບຂັ້ນປະຖົມ ຂັ້ນແຂວງ ແລະ ຂັ້ນເມືອງໃຫ້ເຂົ້າໃຈ ແລະ ຊາບຊຶ້ງໃນການຈັດຕັ້ງປະຕິບັດ.

- ໃຫ້ຄະນະຮັບຜິດຊອບການເລື່ອນຂັ້ນແບບຕໍ່ເນື່ອງຂັ້ນເມືອງ ດຳເນີນການເລືອກເຟັ້ນເອົາໂຮງຮຽນຕາມຈຳນວນທີ່ຫ້ອງການສຶກສາທິການເມືອງເຫັນວ່າມີຄວາມສາມາດຄຸ້ມຄອງ,ຊີ້ນຳແລະນຳພາໄດ້.
- ຈັດກອງປະຊຸມເຜີຍແຜ່ ຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງສຶກສາທິການ ກ່ຽວກັບການຈັດຕັ້ງ ແລະ ດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງສຳລັບຂັ້ນປະຖົມສຶກສາໃຫ້ຜູ້ອຳນວຍການໂຮງຮຽນທີ່ເລືອກເຟັ້ນໄດ້ແລ້ວ.
- ແຕ່ງຕັ້ງຄະນະຮັບຜິດຊອບການເລື່ອນຂັ້ນແບບຕໍ່ເນື່ອງຂັ້ນໂຮງຮຽນເຊິ່ງປະກອບມີ :

| | |
|---|---|
| 1. ຜູ້ອຳນວຍການໂຮງຮຽນ | ເປັນ ຫົວໜ້າ |
| 2. ຜູ້ຮອງອຳນວຍການໂຮງຮຽນ | ເປັນ ຮອງ |
| 3. ຕາງໜ້າຄະນະພັດທະນາການສຶກສາຂັ້ນບ້ານຫຼືອຳນາດການປົກຄອງບ້ານ | ເປັນ ກຳມະການ |
| 4. ຄູສອນທຸກຄົນພາຍໃນໂຮງຮຽນ | ເປັນ ກຳມະການ |
| 5. ຄູວິຊາການໂຮງຮຽນ | ເປັນ ເລຂານຸການ |

- *ການຈັດຕັ້ງປະຕິບັດລະດັບໂຮງຮຽນ:*
  - ໃຫ້ແຕ່ລະໂຮງຮຽນທີ່ຖືກເລືອກເຟັ້ນຈັດກອງປະຊຸມຮ່ວມກັນລະຫວ່າງຜູ້ອຳນວຍການ, ຄູ, ຄະນະພັດທະນາການສຶກສາຂັ້ນບ້ານ ຫຼື ອຳນາດການປົກຄອງບ້ານ, ສະມາຄົມພໍ່ແມ່ນັກຮຽນ ແລະ ທຸກພາກສ່ວນກ່ຽວຂ້ອງ ເພື່ອເຜີຍແຜ່ຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງສຶກສາທິການກ່ຽວກັບການຈັດຕັ້ງແລະດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງໃຫ້ເຂົາເຈົ້າເຂົ້າໃຈແຈ້ງ ໂດຍສະເພາະແມ່ນ ຫຼັກການປະຕິບັດ.
  - ສຳລັບສົກຮຽນທຳອິດ(2009-2010) ໃຫ້ຈັດຕັ້ງແລະດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງຢູ່ຂັ້ນຮຽນ ປ1 ແລະ ຂັ້ນຮຽນ ປ2 ກ່ອນ.

<u>*ໄລຍະທີ 2 :*</u>

- ໃຫ້ສືບຕໍ່ດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງຢູ່ໂຮງຮຽນທີ່ໄດ້ດຳເນີນມາແລ້ວຂັ້ນຮຽນປ1 ແລະ ຂັ້ນຮຽນ ປ2 ຈາກສົກຮຽນທຳອິດເປັນຂັ້ນຮຽນປ3 ແລະ ຂັ້ນຮຽນປ4, ພ້ອມດຽວກັນນັ້ນໃຫ້ດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງຂັ້ນຮຽນ ປ1 ທີ່ເຂົ້າໃໝ່ຕໍ່ໄປ.
- ໃຫ້ສືບຕໍ່ຂະຫຍາຍໂຮງຮຽນທີ່ຈະຈັດຕັ້ງ ແລະ ດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງ ເພີ່ມຕື່ມອີກຈາກຈຳນວນທີ່ໄດ້ດຳເນີນມາແລ້ວຢູ່ແຕ່ລະເມືອງຕາມຄວາມສາມາດຄຸ້ມຄອງຂອງຫ້ອງການສຶກສາທິການເມືອງ.

<u>*ໄລຍະທີ 3 :*</u>

- ໃຫ້ສືບຕໍ່ຈັດຕັ້ງ ແລະ ດຳເນີນການຄືກັນກັບໄລຍະທີ 2 ແລະ ໃນແຕ່ສົກຮຽນກໍໃຫ້ເພີ່ມຈຳນວນໂຮງຮຽນຂຶ້ນຕາມລຳດັບ ຕາມຄວາມສາມາດຄຸ້ມຄອງຂອງຫ້ອງການສຶກສາທິການເມືອງ .

- ຮອດປີ 2015 ໃຫ້ແຕ່ລະເມືອງມີໂຮງຮຽນທີ່ຈັດຕັ້ງແລະດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງໃຫ້ໄດ້ໝົດທຸກໂຮງຮຽນຢູ່ພາຍໃນເມືອງຂອງຕົນ.

*VI. ການຕິດຕາມປະເມີນຜົນ:*

ການຕິດຕາມປະເມີນຜົນການເລື່ອນຂັ້ນແບບຕໍ່ເນື່ອງຂອງໂຮງຮຽນທີ່ໄດ້ດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງໃຫ້ປະຕິບັດຕາມຄວາມຮັບຜິດຊອບແຕ່ລະຂັ້ນດັ່ງນີ້ :

- **ກົມປະຖົມແລະອະນຸບານສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ :**

ກົມປະຖົມແລະອະນຸບານສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງຮ່ວມກັນດຳເນີນການຕິດຕາມປະເມີນຜົນການເລື່ອນຂັ້ນແບບຕໍ່ເນື່ອງໂດຍຊຸ່ມເອົາໂຮງຮຽນທີ່ດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງຢູ່ບາງເມືອງຂອງບາງແຂວງເພື່ອໃຫ້ພຽງພໍກັບການປະເມີນ ແລະ ເອົາຜົນການປະເມີນມາວິໄຈເບິ່ງຜົນດີ ແລະ ຂໍ້ຄົງຄ້າງ ເພື່ອຊອກຫາວິທີການແກ້ໄຂໃນຕໍ່ໜ້າ.

- **ພະແນກສຶກສາທິການແຂວງ :**

ຄະນະຮັບຜິດຊອບການເລື່ອນຂັ້ນແບບຕໍ່ເນື່ອງນະຄອນຫຼວງ ແລະ ແຂວງ ດຳເນີນການຕິດຕາມ, ປະເມີນຜົນການເລື່ອນຂັ້ນແບບຕໍ່ເນື່ອງໂດຍຊຸ່ມເອົາບາງໂຮງຮຽນທີ່ດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງ 2 ຄັ້ງຕໍ່ປີ. ຄັ້ງທີ1 ແມ່ນ ເດືອນກຸມພາ, ຄັ້ງທີ2 ແມ່ນເດືອນເມສາ ແລະ ນຳເອົາຜົນການປະເມີນ ມາວິໄຈເບິ່ງຜົນດີ ແລະ ຂໍ້ຄົງຄ້າງ ເພື່ອຊອກຫາວິທີການແກ້ໄຂໃຫ້ທັນການ.

- **ຫ້ອງການສຶກສາທິການເມືອງ:**

ຄະນະຮັບຜິດຊອບການເລື່ອນຂັ້ນແບບຕໍ່ເນື່ອງຂັ້ນເມືອງດຳເນີນການຕິດຕາມ,ແນະນຳ, ຊ່ວຍເຫຼືອ ແລະ ນຳພາຕົວຈິງຢູ່ໂຮງຮຽນທີ່ດຳເນີນການເລື່ອນຂັ້ນແບບຕໍ່ເນື່ອງທຸກໂຮງຮຽນຢ່າງໜ້ອຍ 2 ເດືອນຕໍ່ຄັ້ງ.

ເມື່ອໄດ້ຮັບຄຳສັ່ງແນະນຳສະບັບນີ້ແລ້ວ ໃຫ້ຫົວໜ້າພະແນກສຶກສາທິການນະຄອນຫລວງ ແລະ ສຶກສາທິການແຂວງ ຈົ່ງພ້ອມກັນຄົ້ນຄວ້າໃຫ້ຊາບຊຶ້ງ ແລ້ວຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຄຳສັ່ງແນະນຳສະບັບດັ່ງກ່າວນີ້ໃຫ້ໄດ້ຮັບຜົນເປັນຈິງ .

ທ. ລັດຖະມົນຕີວ່າການກະຊວງສຶກສາທິການ

ແສງເດືອນ ຫຼ້າຈັນທະບູນ